# ທຄຕລ ຂະຫຍາຍຕາໜ່າງບໍລິການ ທີ່ແຂວງໄຊສົມບູນ



ໃນຕອນແລງ ວັນສຸກ, ວັນທີ **06/05/2016**, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ເປີດໜ່ວຍບໍລິການໄຊສົມບູນ ຂຶ້ນຢ່າງເປັນທາງການ, ຊຶ່ງໜ່ວຍບໍລິການດັ່ງກ່າວ ຕັ້ງຢູ່ບ້ານພູຫົວຊ້າງ, ເມືອງອານຸວົງ, ແຂວງໄຊສົມບູນ. ການຂະຫຍາຍຕາໜ່າງບໍລິການໃນຄັ້ງນີ້ ກໍ່ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ-ລັດ ກໍຄືແຜນຍຸດທະສາດ ແລະ ນະໂຍບາຍລວມຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນການຂະຫຍາຍຕາໜ່າງການບໍລິການເພື່ອຮັບໃຊ້ສັງຄົມຢ່າງທົ່ວເຖິງ ໂດຍການຂະຫຍາຍເຄືອຂ່າຍຂອງຕົນລົງສູ່ຮາກຖານຊຸມຊົນໃນຂອບເຂດທົ່ວປະເທດ.

ໜ່ວຍບໍລິການໄຊສົມບູນ ເປັນໜ່ວຍໜຶ່ງທີ່ຂຶ້ນກັບ ທຄຕລ ສຳນັກງານໃຫຍ່ ຊຶ່ງມີການບໍລິການຮອບດ້ານ, ພະນັກງານທຸກຄົນລ້ວນແລ້ວແຕ່ໄດ້ຮັບການຝຶກອົບຮົມມາເປັນຢ່າງດີ ໂດຍສະເພາະແມ່ນທາງດ້ານຄວາມຮູ້-ຄວາມສາມາດປະສົບການໃນການບໍລິການ ແລະ ມີຄວາມພ້ອມທີ່ຈະບໍລິການລູກຄ້າພາຍໃນແຂວງໄຊສົມບູນໃຫ້ດີທີ່ສຸດບົນພື້ນຖານການນຳໃຊ້ລະບົບ Core Banking ໃໝ່ທີ່ທັນສະໄໝ ແລະ ມີຊື່ສຽງຢູ່ໃນໂລກ.

ເນື່ອງໃນໂອກາດສຳຄັນດັ່ງກ່າວ ໃຫ້ກຽດຕັດແຖບຜ້າ, ລັ່ນຄ້ອງ 9 ບາດ ແລະ ເປີດພິທີຢ່າງເປັນທາງການຂອງ **ທ່ານ ລາວປາວຊົ່ງ ນະວົງໄຊ** ຮອງເຈົ້າແຂວງໆໄຊສົມບູນ ແລະ **ທ່ານ ພັນຊະນະ ຄຸນນຸວົງ** ປະທານກວດກາຄະນະພັກຮາກຖານ, ຮອງຜູ້ອຳນວຍການໃຫຍ່ ທຄຕລ. ພ້ອມນີ້, ກໍມີບັນດາທ່ານການນຳຂອງແຂວງໄຊສົມບູນ, ນັກທຸລະກິດ, ພໍ່ແມ່ປະຊາຊົນພາຍໃນແຂວງ ແລະ ພະນັກງານຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນເຂົ້າຮ່ວມຢ່າງຫຼວງຫຼາຍ

ໂດຍ: ຄຳສະຫວັນ ອຸດທະຈັກ